ໂຄງການໂດຍຫຍໍ້

# BRIDGE: ສ້າງການສົນທະນາປຶກສາຫາລືກັນ ແລະ ການບໍລິຫານປົກຄອງກ່ຽວກັບສາຍນ້ຳ

## ເຂດພາກພື້ນແມ່ນ້ຳຂອງ: ແມ່ນ້ຳເຊກອງ (ປະເທດຫວຽດນາມ - ສປປ ລາວ - ກຳປູເຈຍ), ແມ່ນ້ຳເຊສານ (ປະເທດ ຫວຽດນາມ - ກຳປູເຈຍ), ເຊຣປົກ ( ປະເທດຫວຽດນາມ - ກຳປູເຈຍ)



### ເນື້ອໃນ

ແມ່ນ້ຳ ເຊກອງ, ເຊສານ ແລະເຊຣປົກ ຂອງກຳປູເຈຍ, ສປປ ລາວ ແລະ ຫວຽດນາມ ແມ່ນສາຂາແມ່ນ້ຳຂອງທີ່ມີການພົວພັນກັນ ຂ້າມຊາຍແດນ. ແມ່ນ້ຳ 03 ສາຍນີ້ໄດ້ເອີ້ນມາເອີ້ນໂຮມເຂົ້າ ກັນວ່າເປັນແມ່ນ້ຳ 3ຊ - ຊຶ່ງໃຊ້ເພື່ອເປັນເຄື່ອງມືໃນດ້ານອຸທົກວິທະຍາ ຂອງແມ່ນ້ຳຂອງຕອນລຸ່ມ, ຊຶ່ງປະກອບສ່ວນເຖິງ 18% ໃຫ້ແກ່ອັດຕາ ປະລິມານການໄຫລຂອງນ້ຳທັງໝົດປະຈຳປີ.

ອ່າງແມ່ນ້ຳ 3ຊ ຍັງເປັນອູ່ເຂົ້າອູ່ນ້ຳໃນການດຳລົງຊີວິດຂອງປະຊາຊົນຈຳນວນຫລາຍກວ່າ 3 ລ້ານຄົນ, ສ່ວນໃຫຍ່ ແມ່ນອາໄສຊັບພະຍາກອນແມ່ນ້ຳ. ເມື່ອໄດ້ມີການພັດທະນາໃນ ພາກພື້ນນີ້, ກໍ່ໄດ້ມີການພິຈາລະນາທ່າແຮງດ້ານເຂື່ອນໄຟຟ້າພະລັງນ້ຳ ແລະ ຊົນລະປະທານໃນເຂດອ່າງ, ແມ່ນ້ຳ 3ຊໄດ້ ຖືກຄາດຫວັງໃຫ້ສືບຕໍ່ ມີບົດບາດອັນສຳຄັນ ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ ຂອງຊຸມຊົນທີ່ອາໃສຢູ່ຕາມອ່າງແມ່ນ້ຳ ແລະ ກໍ່ຄືທັງໝົດທົ່ວທັງພາກພື້ນ.

### ວິທີການຂອງພວກເຮົາ

ການບໍລິຫານປົກຄອງຂ້າມແດນ ແບບມີສ່ວນຮ່ວມນັ້ນແມ່ນເປັນປັດໃຈອັນສຳຄັນໃຫ້ແກ່ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນນ້ຳໃນຂົງເຂດອ່າງນ້ຳ 3ຊ ໃຫ້ມີປະສິດທິຜົນ ແລະ ມີຄວາມຍືນຍົງ.

ອົງການ IUCN ພາຍໃຕ້ໂຄງການ ສ້າງການສົນທະນາປຶກສາຫາລືກັນ ແລະ ການບໍລິຫານປົກຄອງກ່ຽວກັບສາຍນ້ຳ (BRIDGE) ຊຶ່ງໄດ້ຮັບການສະໜັບສະໜູນຈາກ ອົງການ ສະວິສເພື່ອການພັດທະນາ ແລະ ການຮ່ວມມື (SDC), ແມ່ນເພື່ອຄົ້ນຫາ ແລະ ເອື້ອອຳນວຍຄວາມສະດວກ ໃຫ້ແກ່ຂະບວນການຮ່ວມມືໃນເຂດພາກພື້ນແມ່ນ້ຳ 3ຊ-ນີ້, ໂດຍສ້າງຄວາມເຂັ້ມແຂງດ້ານ ການບໍລິຫານປົກຄອງນ້ຳ ໂດຍຜ່ານການປ່ຽນແປງຮູບແບບຂອງການບໍລິຫານປົກຄອງ, ແຜນງານການແລກປ່ຽນ ຄວາມຮູ້ ແລະ ການສົນທະນາກັບຜູ້ທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງ.

ອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN)

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

BRIDGE

## ການບໍລິຫານປົກຄອງນໍ້າ ແມ່ນຫຍັງ?

ການບໍລິຫານປົກຄອງນໍ້າ ແມ່ນການວາງ "ລະບຽບ" ໃຫ້ແກ່ວິທີເພື່ອໃຊ້ໃນການບໍລິຫານນໍ້າ. ສິ່ງດັ່ງກ່າວໄດ້ກຳນົດ ວິທີການ, ຫລື ການຄຸ້ມຄອງຊັບພະຍາກອນນໍ້າ ວ່າໄດ້ຖືກຈັດຕັ້ງປະຕິບັດໃນຮູບແບບທີ່ມີລັກສະນະຍືນຍົງຫລືບໍ. ຜົນຂອງການຄຸ້ມຄອງບໍລິຫານຊັບພະຍາກອນນໍ້າທີ່ບໍ່ດີນັ້ນ ກໍ່ຈະສົ່ງຜົນໃຫ້ຊັບພະຍາກອນນໍ້າເຊື່ອມໂຊມ ແລະ ການແບ່ງປັນນໍ້າແບບເກີນຂອບເຂດ, ຊຶ່ງເປັນສາເຫດໃຫ້ມີການທຳລາຍໂອກາດຂອງຜູ້ທຸກຈົນ ແລະ ການສູນເສຍຂອງຊີວະນາໆພັນ, ແລະເຮັດໃຫ້ການດຳລົງຊີວິດ ແລະ ການຂະຫຍາຍ ຕົວທາງດ້ານເສດຖະກິດ ມີຄວາມອ່ອນແອ ແລະ ຟື້ນຟູຊ້າ. ການບໍລິຫານປົກຄອງນໍ້າ ຖືກສ້າງຂຶ້ນຕາມນະໂຍບາຍ, ກົດໝາຍ ແລະ ການຈັດຕັ້ງໃນແຕ່ລະປະເທດ. ສຳລັບອ່າງນໍ້າຂ້າມຜ່ານຊາຍແດນ, ການບໍລິຫານປົກຄອງນໍ້າທີ່ດີ ຕ້ອງການການຮ່ວມ ມືຈາກຫລາຍປະເທດ ທີ່ມີການແບ່ງປັນນໍ້ານຳກັນ.



## ຈຸດປະສົງໃນພາກພື້ນແມ່ນໍ້າຂອງ

ຫລາຍກວ່າສອງທົດສະວັດທີ່ຜ່ານມາ, ອ່າງແມ່ນໍ້າ 3ຊ ໄດ້ພົບເຫັນການເພີ້ມຂື້ນຂອງ ບ້ານຢູ່ອາໄສຂອງຄົນເຮົາ, ແລະ ພ້ອມກັບ ການຂະຫຍາຍຕົວ ທາງດ້ານເສດຖະກິດ ແລະ ສັງຄົມທີ່ວ່ອງໄວ. ດັ່ງນັ້ນ ມັນຈື່ງມີຄວາມຈຳເປັນທີ່ຈະຕ້ອງມີການ ວາງຍຸດທະສາດໄລຍະຍາວທີ່ເໝາະສົມກັບ ຄວາມຕ້ອງການຂອງ ການຂະຫຍາຍຕົວຂອງປະຊາກອນ ແລະ ສິ່ງແວດລ້ອມທີ່ເພີ່ມຂຶ້ນ ເພື່ອຢຸດຢັ້ງແຮງກົດດັນ ທີ່ກຳລັງປະເຊີນໜ້າ ແລະ ເພື່ອຮັບປະກັນການແບ່ງປັນຜົນປະໂຫຍດກ່ຽວກັບຊັບພະຍາ ກອນນໍ້າ ໃຫ້ເທົ່າທຽມກັນ.

ເພື່ອສົ່ງເສີມໃຫ້ມີ ວິໄສທັດຮ່ວມກັນສຳລັບການນຳໃຊ້ຊັບພະຍາກອນນໍ້າແບບຍືນຍົງ ໃນອ່າງນໍ້າ 3ຊ, ທາງອົງການ IUCN ແມ່ນພວມຈັດຕັ້ງປະຕິບັດວຽກງານ ເພື່ອໃຫ້ບັນລຸຕາມຈຸດປະສົງຕ່າງໆຕໍ່ໄປນີ້:

### *ການສ້າງ ກອບແຜນວຽກ ໃນໂຄງສ້າງການຈັດຕັ້ງ ແລະ ການຮ່ວມມືຂ້າມແດນ*

ວິທີການເບື້ອງຕົ້ນເພື່ອສ້າງແຜນງານລະອຽດແບບຄົບຊຸດໃຫ້ແກ່ອ່າງແມ່ນໍ້າ 3ຊ ແມ່ນຈະໄດ້ມີການສ້າງຕັ້ງ ກອງເລຂາຂັ້ນແຂວງ ແລະ ອົງການຈັດຕັ້ງ ທີ່ເໝາະສົມຢູ່ເຂດອ່າງນໍ້າເຊກອງຂຶ້ນ. ກອບແຜນວຽກທີ່ເໝາະສົມໃນການຈັດຕັ້ງປະຕິບັດ ຂອງປະເທດຕ່າງໆສຳຫລັບການຈັດຕຽມປະຕິບັດ ຈະໄດ້ສ້າງຂຶ້ນ ສຳລັບອ່າງແມ່ນໍ້າໃນເຂດເຊສານ ແລະ ເຊຣປົກ.

### *ການເພີ້ມພູນ ແລະ ການກະຕຸກຊຸກຍູ້ ໃຫ້ມີເວທີກ່ຽວກັບການແລກປ່ຽນຄວາມຮູ້*

ຂໍ້ມູນຈາກການວິເຄາະທາງ ດ້ານສະຖານະພາບ ໄດ້ສະເໜີເພື່ອເພີ່ມເຕີມ ຊ່ອງຫວ່າງທາງດ້ານຄວາມຮູ້ ທີ່ຈະໄດ້ຖືກສັງ ລວມເຂົ້າໃສ່ໃນບົດສະຫລຸບກ່ຽວກັບອ່າງ ແລະ ໄດ້ບັນທຶກເຂົ້າໃນຖານຂໍ້ມູນທີ່ສາມາດເຂົ້າເຖິງໄດ້. ຜູ້ທີ່ມີສ່ວນຮ່ວມທຸກພາກສ່ວນ ສາມາດນຳໃຊ້ຖານຂໍ້ມູນນີ້ ຄືກັນກັບແຫລ່ງຂໍ້ມູນ ຂ່າວສານອື່ນໆ.

### *ການຍົກລະດັບຄວາມອາດສາມາດ ໃນດ້ານການເປັນຜູ້ນຳ ແລະ ກົນໄກການຄຸ້ມຄອງບໍລິຫານ*

ແຜນງານຝຶກອົບຮົມ ດ້ານແນວຄວາມຄິດໃນ ການບໍລິຫານ ຊັບພະຍາກອນນໍ້າ, ເຊັ່ນ: ການໄຫລວຽນຂອງສິ່ງແວດລ້ອມ ແລະ ການເຈລະຈາຕໍ່ລອງ ດ້ານນໍ້າ ຈະໄດ້ນຳສະເໜີຕໍ່ ການນຳລະດັບທ້ອງຖິ່ນເພື່ອສົ່ງເສີມການຄຸ້ມຄອງ ຊັບພະຍາກອນນໍ້າແບບປະສົມປະສານ ແລະ ການເຂົ້າຮ່ວມໃນການສະໜັບສະໜູນດ້ານນະໂຍບາຍ.

### ໂຄງການ BRIDGE ຢູ່ໃນລະດັບໂລກ

ໂຄງການ BRIDGE ຢູ່ໃນລະດັບໂລກ ໄດ້ຈັດຕັ້ງປະຕິບັດ ໃນ 9 ເຂດອ່າງແມ່ນໍ້າຂ້າມຊາຍແດນຄື:

- ເຂດອາເມລິກາໄຕ້: ແມ່ນໍ້າຊາຣູມິລາ (ເອກົວດໍ-ເປຣູ), ແມ່ນໍ້າກາຕາມາຢໍຊີຣາ (ເອກົວດໍ-ເປຣູ), ອ່າງທະເລສາບຕິຕິກາກາ (ເປຣູ-ໂບລິເວຍ)
- ເຂດອາເມລິກາລາຕິນ (Mesoamerica): ແມ່ນໍ້າໂຄອາຕັນ (ເມັກຊິໂກ-ກົວເຕມາລາ), ແມ່ນໍ້າໂກແອັດສະໂຄຣານ (ຮອນດູຣັດ-ເອວສາວາດໍ), ແມ່ນໍ້າຊິຊາໂອລາ (ໂຄດສະຕາຣິກາ-ປານາມາ).
- ພາກພື້ນແມ່ນໍ້າຂອງ: ແມ່ນໍ້າເຊກອງ (ຫວຽດນາມ-ສປປ ລາວ-ກຳປູເຈຍ), ແມ່ນໍ້າເຊຣປົກ (ຫວຽດນາມ-ກຳປູເຈຍ), ແມ່ນໍ້າເຊຊານ (ຫວຽດນາມ-ກຳປູເຈຍ)

**ວາລະສານສື່ສິ່ງພິມ**

*SHARE – ການບໍລິຫານນໍ້າຂ້າມແດນ*

*NEGOTIATE – ການບັນລຸຂໍ້ຕົກລົງບົນຫລັກການກ່ຽວກັບນໍ້າ*

*RULE– ການປະຕິຮູບປັບປຸງແຫລ່ງຊັບພະຍາກອນນໍ້າ*

ຄູ່ມືນຳໃຊ້ຂອງ WANI ສາມາດ ໂຫລດໄດ້ຈາກເວັບໄຊວາລະສານສື່ສິ່ງພິມຂອງ ອົງການ IUCN ໄດ້ທີ່:

www.iucn.org/knowledge/publications_doc

### ຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ສອບຖາມໄດ້ທີ່:

ດຣ. ລະລິຕາ ຣາມມ້ອນທ໌
ຜູ້ຄຸ້ມຄອງແຜນງານໂຄງການ
ອີເມລ: lalita.rammont@iucn.org

ແຜນງານ IUCN ດ້ານນໍ້າ, ອາຊີ
www.iucn.org/asia_water
www.3sbasin.org